## ປະເມີນການຈັດຕັ້ງແບບຟອມປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໂຄງການລົງທຶນ ສຳລັບ ໂຄງການເຂື່ອນໄຟຟ້ານ້ຳງຽບ 3 A ທີ່ເມືອງຄູນ, ແຂວງຊຽງຂວາງ.

### I. <u>ຂໍ້ມູນກ່ຽວກັບໂຄງການ</u>

- **ຊື່ໂຄງການ:** ເຂື່ອນໄຟຟ້ານ້ຳຕົກ ນ້ຳງຽບ 3 A
- **ຊື່ເຈົ້າຂອງໂຄງການ:** ບໍລິສັດ ຈະເລີນເຊກອງພະລັງງານ ຈຳກັດ
- **ປະເພດໂຄງການ:** ເຂື່ອນໄຟຟ້ານ້ຳຕົກ
- **ຂະແໜງການ:** ໄຟຟ້າ
- **ໄລຍະສຳປະທານ:** 30 ປີ
- **ກຳລັງຕິດຕັ້ງ:** 44 ເມກາວັດ
- **ກຳລັງການຜະລິດ:** 144 ກິກະວັດໂມງຕໍ່ປີ
- **ເນື້ອທີ່ອ່າງໂຕ່ງ:**
- **ສະຖານະພາບໂຄງການ (IEE/EIA):** ໄລຍະດຳເນີນງານ
- **ໃບຢັ້ງຢືນຮັບຮອງ (IEE/EIA):** EIA

  **ສະບັບເລກທີ** 2542/ກຊສ, **ລົງວັນທີ** 20 ເມສາ 2012
- **ໃບຮັບຮອງ EMMPCP/OP:**
- **ເນື້ອທີ່ສຳປະທານ:.........................ເຮັກຕາ**

### II. <u>ຄະນະຕິດຕາມກວດກາ</u>

- **ວັນທີລົງຕິດຕາມກວດກາ:** 06-09 ພະຈິກ 2017
- **ປະເພດການຕິດຕາມກວດກາ:** ບໍ່ປົກກະຕິ
- **ຄະນະຕິດຕາມກວດກາ:** ທ່ານ ອາລິຍະສັກ ຕຸນາລົມ, ຮອງຫົວໜ້າ ກຕຊສ
- **ບົດບັນທຶກລົງຕິດຕາມກວດກາ:** ຄັດຕິດມາພ້ອມນີ້
- **ລາຍຊື່ຄະນະລົງຕິດຕາມກວດກາ:** ຄັດຕິດມາພ້ອມນີ້
- **Checklist:** ຄັດຕິດມາພ້ອມນີ້

## III. ຈຸດປະສົງຂອງການກວດກາ ແລະ ບັນຫາທີ່ເອົາໃຈໃສ່

- ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດມາດຕະການປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຕາມ ຜຄຕສ ທີ່ໄດ້ກຳນົດໄວ້ ໃນບົດລາຍງານການການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;
- ເງື່ອນໄຂ ແລະ ພັນທະທີ່ກຳນົດໃນໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມທີ່ຖືກຮັບຮອງໄປແລ້ວນັ້ນ.

## IV. ສະພາບໂຄງການໃນປະຈຸບັນ

ໂຄງການເຂື່ອນໄຟຟ້ານ້ຳງຽບ 3 A ຕັ້ງຢູ່ເມືອງຄູນ, ແຂວງຊຽງຂວາງ, ຕັ້ງຢູ່ຕອນເທິງຂອງສາຍນ້ຳລິນ ຫ່າງຈາກບ້ານໂພນແຍງ, ເມືອງຄູນ, ແຂວງຊຽງຂວາງ ປະມານ 7 ກມ, ໂຄງການດັ່ງກ່າວ ມີກຳລັງການຕິດຕັ້ງທັງໝົດ 44 ເມກາວັດ ແລະ ສາມາດຜະລິດໄດ້ 144 ກິກາວັດໂມງ/ປີ, ສັນເຂື່ອນມີລວງສູງ 30 ແມັດ ເຊິ່ງມີລະດັບນ້ຳສູງສຸດ 1050 ແມັດ ທຽບໃສ່ໜ້ານ້ຳທະເລ, ມີເນື້ອທີ່ອ່າງເກັບນ້ຳ 30 ເຮັກຕາ, ລະບົບກໍ່ສ້າງສາຍສົ່ງ 115 ກິໂລໂວນ, ລວງຍາວສາຍສົ່ງ 5 ກິໂລແມັດ, ມີອາຍຸສຳປະທານ 30 ປີ. ໄດ້ສົ່ງຜົນກະທົບຕໍ່ດິນທຳການຜະລິດຂອງປະຊາຊົນຈຳນວນ 10 ຄອບຄົວ, ມີ 67 ຄົນ, ເນື້ອທີ່ດິນນາປະມານ 5.7 ເຮັກຕາ. ໂຄງການດັ່ງກ່າວ ໄດ້ຮັບໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ໃນປີ 2012 ແລະ ຮັບຮອງເອກະສານຊ້ອນທ້າຍ 2 (Schedule 2) ຂອງສັນຍາສຳປະທານ ວ່າດ້ວຍ ພັນທະທາງດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນປີ 2013. ໂຄງການດັ່ງກ່າວ ໄດ້ຮັບການພັດທະນາໂດຍບໍລິສັດ ພົງຊັບທະວີກໍ່ສ້າງຂົວທາງ ແລະ ຊົນລະປະທານ ຈຳກັດ ແລະ ໄດ້ສຳເລັດການກໍ່ສ້າງ ແລະ ເລີ່ມດຳເນີນການຜະລິດກະແສໄຟຟ້າໃນວັນທີ 01 ສິງຫາ 2014. ມາເຖິງປະຈຸບັນ ໄດ້ມອບກຳມະສິດໃຫ້ແກ່ ບໍລິສັດ ຈະເລີນເຊກອງພະລັງງານ ຈຳກັດ ເປັນຜູ້ສືບຕໍ່ດຳເນີນກິດຈະການ.

## V. ບັນຫາທີ່ພົບເຫັນ

- **ສິ່ງເສດເຫຼືອ:** ຂີ້ເຫຍື້ອຈາກຄົວເຮືອນ, ຈາກການກໍ່ສ້າງແຄ້ມພັກພະນັກງານ ບໍ່ມີການແຍກປະເພດຂີ້ເຫຍື້ອ ແລະ ສະຖານທີ່ ກຳຈັດຂີ້ເຫຍື້ອ ແມ່ນບໍ່ເປັນລະບົບ ໃນການຄຸ້ມຄອງ;
- **ເຂດບໍ່ດິນ ແລະ ບໍ່ຫີນ:** ເສດດິນ, ເສດຫີນ ຖິ້ມຊະຊາຍ ແລະ ຍັງບໍ່ມີແຜນການຟື້ນຟູສະພາບສິ່ງແວດ ລ້ອມດັ່ງກ່າວ
- **ການປ່ອຍນ້ຳເສຍອອກຈາກຄົວເຮືອນ ແມ່ນປ່ອຍໂດຍກົງລົງສູ່ສາຍນ້ຳທຳມະຊາດ:** ຍັງບໍ່ມີລະບົບບຳບັດ ນ້ຳເສຍ ກ່ອນຈະປ່ອຍອອກສູ່ສາຍນ້ຳທຳມະຊາດ
- **ເຂດໂຮງປັ່ນໄຟຟ້າ:** ບໍ່ມີການປ່ອຍນ້ຳລົງເຂດລຸ່ມເຂື່ອນ ເພື່ອຮັກສາລະບົບນິເວດຕາມສາຍນ້ຳ ແລະ ການນຳໃຊ້ນ້ຳ ຂອງປະຊາຊົນໃນເຂດລຸ່ມເຂື່ອນ;
- **ແລະ ອື່ນໆ:**

## VI. <u>ສະເໜີແກ້ໄຂ</u>

- **ກໍານົດເວລາໃນການແກ້ໄຂ:** 90 ວັນລັດສະການ
- **ບັນຫາອອກໃຫ້ໂດຍ:** ກະຊວງ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ
- **ອະທິບາຍການແກ້ໄຂບັນຫາໂດຍຫຍໍ້:**

- ບໍລິສັດ ຕ້ອງສ້າງລະບົບແຍກປະເພດຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ ຈາກເຮືອນພັກກໍາມະກອນ, ຫ້ອງການ ແລະ ຈາກການກໍ່ສ້າງແຄ້ມ ພະນັກງານ ພ້ອມນີ້ໃຫ້ ບໍລິສັດ ປະສານສົມທົບ ພຊສ ແຂວງຊຽງຂວາງ ແລະ ຫຊສ ເມືອງຄູນ ເພື່ອກໍານົດສະ ຖານທີ່ຖິ້ມຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ, ການສ້າງລະບົບຄຸ້ມຄອງໃຫ້ຖືກຕ້ອງຕາມຫຼັກວິຊາການ;
- ຕ້ອງສ້າງລະບົບບໍາບັດນໍ້າເສຍ ຈາກເຮືອນພັກກໍາມະກອນ, ອູ່ສ້ອມແປງເຄື່ອງຈັກ ແລະ ສະຖານທີ່ເກັບມ້ຽນນໍ້າມັນ ກ່ອນ ຈະປ່ອຍລົງສູ່ສາຍນໍ້າທໍາມະຊາດ;
- ໃຫ້ຕິດຕັ້ງປ້າຍເຕືອນອັນຕະລາຍເພີ່ມເຕີມ ໃນເຂດທີ່ມີຄວາມສ່ຽງເກີດອຸປະຕິເຫດ ເຊັ່ນ: ເຂດໜ້າເຂື່ອນ, ເຂດອ່າງເກັບນໍ້າ, ສະຖານທີ່ເກັບມ້ຽນນໍ້າມັນ ແລະ ເຂດອື່ນໆ ທີ່ເຫັນວ່າມີຄວາມສ່ຽງຈະເກີດອຸປະຕິເຫດ;
- ຕ້ອງສ້າງແຜນການຟື້ນຟູສິ່ງແວດລ້ອມໃນເຂດບໍ່ດິນ, ບໍ່ຫີນ ແລ້ວນໍາສົ່ງໃຫ້ ພຊສ ແຂວງຊຽງຂວາງ ແລະ ຫຊສ ເມືອງຄູນ ພິຈາລະນາຮັບຮອງ;
- ຕ້ອງສ້າງແຜນການຄຸ້ມຄອງອ່າງເກັບນໍ້າຂອງໂຄງການ ແລ້ວນໍາສົ່ງໃຫ້ ກຊສ ພິຈາລະນາຮັບຮອງຕາມລະບຽບ ການ;
- ຕ້ອງກໍານົດອັດຕາການປ່ອຍນໍ້າລົງໃນເຂດລຸ່ມເຂື່ອນ ເພື່ອຮັກສາລະບົບນິເວດຕາມສາຍນໍ້າ ແລະ ການນໍາໃຊ້ນໍ້າ ຂອງປະຊາຊົນໃນເຂດລຸ່ມເຂື່ອນ ຕາມພັນທະຂອງບໍລິສັດ ທີ່ກໍານົດໄວ້ໃນເອກະສານຊ້ອນທ້າຍ ວ່າດ້ວຍ ພັນທະທາງດ້ານສິ່ງແວດລ້ອມ, ຂໍ້ທີ 49 ໜ້າ 35;
- ຕ້ອງສ້າງແຜນຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ໃນໄລຍະດໍາເນີນງານ (ESMMP-OP) ໃຫ້ສໍາ ເລັດກ່ອນເດືອນມິຖຸນາ 2018 ແລ້ວນໍາສົ່ງໃຫ້ ກຊສ ພິຈາລະນາຮັບຮອງ ຕາມພັນທະຂອງບໍລິສັດທີ່ກໍານົດໄວ້ ໃນເອກະສານຊ້ອນທ້າຍ ວ່າດ້ວຍ ພັນທະທາງດ້ານສິ່ງແວດລ້ອມ, ຂໍ້ທີ 67 ໜ້າທີ 50;
- ໃຫ້ບໍລິສັດ ສົມທົບກັບ ກຕຊສ ເພື່ອປຶກສາຫາລື ກ່ຽວກັບ ແຜນການນໍາໃຊ້ງົບປະມານການຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ຂອງພາກລັດຖະບານ ທີ່ໄດ້ກໍານົດໄວ້ໃນເອກະສານຊ້ອນທ້າຍ ວ່າດ້ວຍ ພັນທະທາງ ດ້ານສິ່ງແວດລ້ອມ, ໜ້າທີ່ 93;
- ໃຫ້ບໍລິສັດ ສົມທົບກັບ ພຊສ ແຂວງຊຽງຂວາງ ແລະ ຫຊສ ເມືອງຄູນ ເຄື່ອນໄຫວຕິດຕາມກວດກາຄຸນນະພາບນໍ້າ ຈໍານວນ 2 ຄັ້ງ/ປີ ແລ້ວລາຍງານໃຫ້ ກຕຊສ ຮັບຊາບເປັນປົກກະຕິ;
- ໃຫ້ບໍລິສັດ ສົມທົບກັບ ພຊສ ແຂວງຊຽງຂວາງ ກວດກາຄືນຂໍ້ຕົກລົງ ວ່າດ້ວຍ ການອະນຸຍາດໃຫ້ເຊົ່າສໍາປະທານທີ່ດິນ ຂອງບໍລິສັດ ໄຟຟ້ານໍ້າງຽບ 3 A ຈໍາກັດ ທີ່ໄດ້ເຊັນຮ່ວມກັບ ກຊສ ກ່ຽວກັບ ການຈ່າຍຄ່າເຊົ່າສໍາປະທານທີ່ດິນໃຫ້ ລັດຖະບານ ຕາມທີ່ໄດ້ຕົກລົງກັນໄວ້;

- ຕ້ອງສ້າງບົດລາຍງານຄວາມຄືບໜ້າ ການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການ ປະຈຳໄຕມາດ ແລະ ປະຈຳປີ, ແລ້ວລາຍງານໃຫ້ ກຊສ, ພຊສ ແຂວງຊຽງຂວາງ ແລະ ຫຊສ ເມືອງຄູນ ຮັບຊາບ ແລະ ໃນກໍລະນີເກີດເຫດການສຸກເສີນ ບໍລິສັດ ຕ້ອງລາຍງານໃຫ້ ກຊສ ຮັບຊາບພາຍໃນ 24 ຊົ່ວໂມງ;
- ໃນກໍລະນີ ມີການມອບໂອນ ຫລື ປ່ຽນເຈົ້າຂອງໂຄງການຜູ້ໃໝ່, ເຈົ້າຂອງໂຄງການຜູ້ໃໝ່ ຕ້ອງໄດ້ສືບຕໍ່ປະຕິບັດ ມາດຕະການປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ກຳນົດພັນທະຂອງ ບໍລິສັດ ໄວ້ໃນເອກະສານຊ້ອນທ້າຍ ວ່າດ້ວຍ ພັນທະທາງດ້ານສິ່ງແວດລ້ອມ ຂອງໂຄງການດັ່ງກ່າວ.